ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ຫ້ອງການ

ເລກທີ 2857 /ຫອຄ.ກຂອ

ນະຄອນຫລວງວຽງຈັນ, ວັນທີ 11 ຕຸລາ 2011

<u>ແຈ້ງການເພີ່ມເຕີມ</u>

ເຖິງ : ທ່ານ ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງຈັນ.

ເລື່ອງ : ປັບປຸງເນື້ອໃນ ແຈ້ງການ ເລກທີ 1904/ອຄ.ກຂອ, ລົງວັນທີ 30/9/2011 ຂໍ້1.4 ກ່ຽວກັບຂັ້ນຕອນການອອກອະນຸຍາດນຳເຂົ້າ ແລະ ສົ່ງອອກໄມ້ ແລະ ຜະລິດຕະພັນໄມ້.

- ອີງຕາມແຈ້ງການ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ກ່ຽວກັບການອອກໃບອະນຸຍາດນຳເຂົ້າ ແລະ ສົ່ງຂອກສິນຄ້າແບບອັດຕະໂນມັດ ແລະ ບໍ່ອັດຕະໂນມັດ ສະບັບເລກທີ 0826/ອຄ.ກຂອ, ລົງວັນທີ 3/5/2011.
- ອີງຕາມ ແຈ້ງການ ຂອງກົມອຸດສາຫະກຳ ສະບັບເລກທີ 506/ກອກ.ມຖ, ລົງວັນທີ 5/9/2011 ກ່ຽວກັບບົດແນະນຳການຂຶ້ນບັນຊີຜະລິດຕະພັນໄມ້.

ຫ້ອງການ ກະຊວງອຸດສາຫະກຳ ແລະ ການຄ້າ ຂໍລາຍງານມາຍັງທ່ານຊາບວ່າ : ອີງຕາມແຈ້ງການ ສະບັບເລກທີ 1904/ອຄ.ກຂອ, ລົງວັນທີ 30/9/2011, ຂໍ້ 1.4, ເອກະສານປະກອບການອະນຸຍາດສົ່ງອອກ ຜະລິດຕະພັນໄມ້ສຳເລັດຮູບປະກອບມີ :

1. ສຳເນົາທະບຽນວິສາຫະກິດ ທີ່ອະນຸຍາດດຳເນີນທຸລະກິດໄມ້ ແລະ ທະບຽນອາກອນ.
2. ໃບແຈ້ງລາຄາ ( Invoice ).
3. ໃບຫຸ້ມຫໍ່ ( Packing List ).
4. ໃບແຈ້ງພາສີຂາອອກ ( ຖ້າຜ່ານແຂວງອື່ນ ).
5. ໃບຢັ້ງຢືນ ອ5.

ອີງໃສ່ສະພາບການປ່ຽນແປງ ແລະ ສະພາບຕົວຈິງໃນການອຳນວຍການຄວາມສະດວກໃຫ້ແກ່ການດຳເນີນທຸລະກິດໃນການປະກອບເອກະສານສົ່ງອອກຜະລິດຕະພັນໄມ້ສຳເລັດຮູບ ຕາມຂໍ້ 1.4 ຂອງແຈ້ງການ ເລກທີ 1904/ອຄ.ກຂອ, ລົງວັນທີ 30/9/2011 ໃຫ້ປະກອບເອກະສານດັ່ງນີ້ :

1. ໃບທະບຽນວິສາຫະກິດ ທີ່ອະນຸຍາດໃຫ້ດຳເນີນທຸລະກິດໄມ້ ແລະ ທະບຽນອາກອນ.
2. ໃບແຈ້ງລາຄາ ( Invoice ).
3. ໃບຫຸ້ມຫໍ່ ( Packing List ).

ດັ່ງນັ້ນ , ຈຶ່ງແຈ້ງມາຍັງ ທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມແຈ້ງການສະບັບນີ້ຢ່າງເຂັ້ມງວດ.

ຫົວໜ້າຫ້ອງການ,

ບ່ອນສົ່ງ :

- ຄະນະນຳກະຊວງ ອຄ
- ກະຊວງການເງິນ, ກົມພາສີ " ເພື່ອແຈ້ງໃຫ້ພາກສ່ວນກ່ຽວຂ້ອງ "
- ກົມອຸດສາຫະກຳ